ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ເລກທີ 0009/ປສຊ

ນະຄອນຫລວງວຽງຈັນ, ວັນທີ 22 ມັງກອນ 2024

# ໜັງສືເຊີນເຂົ້າຮ່ວມປະມູນ

ຊື່ໂຄງການ: ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ

ແຫລ່ງທຶນ: IDA Credit No. 67358-LA ແລະ 7359-LA, Project No. P1785454

ຊື່ຂອງສັນຍາ: ການຈັດຊື້ລົດຈັກ, ຈຳນວນ 84 ຄັນ

ສັນຍາເລກທີ: CLEAR/Motorcycle-01/G-S/2024 (CLEAR-G-023)

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນ ເຂົ້າໃນລາຍຈ່າຍຂອງສັນຍາຈັດຊື້ລົດຈັກ ຈຳນວນ 84 ຄັນ.
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນ ສຳລັບການຈັດຊື້ທີ່ໄດ້ລະບຸໄວ້ຂ້າງເທິງ, ສະຖານທີ່ສົ່ງມອບ ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດເມືອງ 10 ເມືອງ, ໄລຍະເວລາໃນການສົ່ງມອບ ແມ່ນ 60 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄວາມເໝາະສົມ ອາດໄດ້ຮັບຂໍ້ມູນຈາກ ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປສຊ) ແລະ ກວດກາເອກະ ສານປະມູນໃນເວລາໂມງການ ແຕ່ 09:00 ຫາ 16:00 ໂມງ ຕາມທີ່ຢູ່ຂ້າງລຸ່ມ.
5. ບໍລິສັດທີ່ມີຄວາມເໝາະສົມ ອາດຊື້ເອກະສານປະມູນຄົບຊຸດ ເປັນພາສາລາວ ໂດຍພົວພັນຫາຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕາມທີ່ຂ້າງລຸ່ມ ແລະ ຈ່າຍເງິນທີ່ຈະບໍ່ສົ່ງຄືນ ຈານວນໜຶ່ງຮ້ອຍ (100) ໂດລາສະຫະລັດ ຫລື ສອງລ້ານແປດແສນກີບ (2,800,000 ກີບ). ວິທີຊຳລະ ຕ້ອງຈ່າຍເປັນເງິນສົດ ແລະ ຮັບເອົາເອກະສານປະມູນ ໃນມື້ຊຳລະເງິນ ຢູ່ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕາມທີ່ຢູ່ຂ້າງລຸ່ມ.
6. ຊອງປະມູນ ຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມ ໃນວັນ ຫລື ກ່ອນ 26 ກຸມພາ 2024, ເວລາ 14:00 ໂມງ. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມ ຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້ ໃນເວລາ 14:00 ໂມງ, ຂອງວັນທີ 26 ກຸມພາ 2024.

7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນ ດ້ວຍກຽດ.
8. ບ່ອນຢູ່ທີ່ເວົ້າເຖິງຢູ່ຂ້າງລຸ່ມແມ່ນ: ຫ້ອງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕັ້ງຢູ່ໃນຫ້ອງການລັດຖະບານ ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ, ໂທ: (856-21) 261479-80, ອີແມວ: youthavinh@clearlaos.org, ເວັບໄຊ: www.prflaos.org.

ຜູ້ອຳນວຍການ,

ພັດນະຄອນ ຄັນທະມີໄຊ